**ມິຊຊາອາທິດທີ 14 ການົດທຳມະດາປີ C**

**ວັນທີ 7 ກໍລະກົດ 2019**



**ພຣະວໍລະສານໂດຍນັກບຸນລູກາ 10, 1-9**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ເລືອກລູກສິດອື່ນອີກເຈັດສິບສອງຄົນແລ້ວສົ່ງພວກເຂົາເປັນຈຸລະສອງຄົນລ່ວງໜ້າພຣະອົງໄປຕາມບ້ານເມືອງຕ່າງໆບ່ອນພຣະອົງຈະສະເດັດໄປ. ພຣະອົງບອກພວກເຂົາວ່າ: ເຂົ້າສຸກເຕັມນາ ແຕ່ຄົນກ່ຽວມີໜ້ອຍ. ຈົ່ງຂໍໃຫ້ເຈົ້າຂອງນາສົ່ງຄົນງານມາກ່ຽວຫລາຍໆເຖີດ. ພວກເຈົ້າຈົ່ງໄປ. ເຮົາສົ່ງພວກເຈົ້າໄປຄືສົ່ງລູກແກະໄປຫາໝູ່ໝາໄນ. ພວກເຈົ້າຢ່າຖືເງິນຖືຍ່ານຫລືເກີບຕິດຕົວໄປເລີຍ. ຢ່າຢຸດຢາມຖາມຂ່າວຜູ້ໃດຕາມທາງ.

ເມື່ອເຂົ້າເຮືອນໃດ, ຂໍໃຫ້ເວົ້າວ່າ: ສັນຕິສຸກຈົ່ງມີແກ່ເຮືອນນີ້ເຖີດ. ຖ້າວ່າຢູ່ເຮືອນນັ້ນມີຜູ້ມັກຊອບສັນຕິສຸກ, ສັນຕິສຸກຂອງພວກເຈົ້າກໍຈະຢູ່ນຳເຂົາ; ຖ້າວ່າບໍ່ມີ, ສັນຕິສຸກນັ້ນກໍຈະຄືນມາຫາພວກເຈົ້າ. ຈົ່ງພັກເຊົາຢູ່ເຮືອນນັ້ນ, ກິນແລະດື່ມຕາມທີ່ຈະມີ ຍ້ອນວ່າຄົນມີສິດໄດ້ຄ່າຈ້າງ. ຢ່າຂຶ້ນເຮືອນນີ້ລົງເຮືອນນັ້ນ.

ເມື່ອເຂົ້າໄປໃນເມືອງໃດ, ຖ້າມີຄົນຕ້ອນຮັບກໍຈົ່ງຮັບກິນຕາມທີ່ເຂົາທານ. ຈົ່ງປິ່ນປົວຄົນເຈັບໄຂ້ໄດ້ພະຍາດ ແລະບອກກັບຊາວເມືອງວ່າ: ພຣະລາໄຊຂອງພຣະເຈົ້າມາຮອດໃກ້ພວກທ່ານແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 10, 1-9**

ວັນອາທິດທີ່ຜ່ານມາ, ພວກເຮົາໄດ້ພ້ອມກັນອ່ານແລະລຳເພິງເຖິງຄວາມສຳຄັນຮີບດ່ວນຂອງການປະກາດພຣະລາໄຊພຣະເຈົ້າໃຫ້ທຸກຄົນໄດ້ຮູ້ຈັກ.

ວັນອາທິດນີ້, ນັກບຸນລູກາຜູ້ຂຽນພຣະວໍລະສານສືບຕໍ່ເລົ່າໃຫ້ພວກເຮົາເຫັນເຖິງການຂາດແຄນຜູ້ທີ່ຈະໄປປະກາດພຣະລາໄຊພຣະເຈົ້າ. ເພາະເຂົ້າສຸກເຕັມນາ ແຕ່ຄົນກ່ຽວມີໜ້ອຍ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງໄດ້ເລືອກລູກສິດຕື່ມອີກເຈັດສິບສອງຄົນ ເພື່ອສົ່ງພວກເຂົາໄປປະກາດພຣະລາໄຊຂອງພຣະເຈົ້າ. ແຕ່ຜູ້ທີ່ປະກາດພຣະລາໄຊຂອງພຣະເຈົ້ານີ້ຕ້ອງມີຄຸນສົມບັດແນວໃດ? ແລະເຂົາຕ້ອງມີຊີວິດຢ່າງໃດໃນເວລາປະຕິບັດວຽກງານນີ້? ພວກເຮົາຈະພ້ອມກັນຊອກຫາຄຳຕອບຂອງຄຳຖາມເຫລົ່ານີ້ໃນວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງ.

ພຣະເຢຊູເຈົ້າຮູ້ດີເຖິງອຸປະສັກແລະອັນຕະລາຍທີ່ຈະເປັນມາກັບພວກລູກສິດເຈັດສິບສອງຄົນທີ່ພຣະອົງຈະສົ່ງໄປ. ຕໍ່ໜ້າຄວາມທ້າທາຍດັ່ງກ່າວແທນທີ່ພຣະອົງຈະບອກພວກເຂົາໃຫ້ຈັດຫາສະບຽງອາຫານແລະເຄື່ອງມືໃນການເດີນທາງໃຫ້ພ້ອມກ່ອນຈະອອກເດີນທາງ, ພຣະອົງພັດບອກພວກເຂົາ: ຢ່າຖືເງິນຖືຍ່າມຫລືເກີບຕິດຕົວໄປເລີຍ. ຄຳສັ່ງບອກຂອງພຣະເຢຊູເຈົ້ານີ້ເບິ່ງຄືກົງກັນຂ້າມກັບສະພາບຕົວຈິງ. ເໝືອນກັບວ່າເງິນຄຳແລະເຄື່ອງນຸ່ງຖືບໍ່ສາມາດຊ່ວຍພວກລູກສິດຂອງພຣະອົງໃຫ້ມີຄວາມປອດໄພໄດ້. ຖ້າເປັນດັ່ງນັ້ນ, ພວກລູກສິດຂອງພຣະເຢຊູເຈົ້າຕ້ອງເພິ່ງອີງອັນໃດ? ແລະພວກເຂົາຈະສາມາດປະຕິບັດພາລະກິດໃຫ້ສຳເລັດໄດ້ບໍ?

ໜຶ່ງໃນຄຳຕອບທີ່ພວກເຮົາສາມາດຮູ້ຈັກໄດ້ນັ້ນຄືຄວາມໄວ້ວາງໃຈໃນພຣະເຈົ້າ. ເປັນຫຍັງຈຶ່ງຕ້ອງໄວ້ວາງໃຈໃນພຣະເຈົ້າ? ເພາະພາລະກິດການປະກາດພຣະລາໄຊພຣະເຈົ້ານັ້ນແມ່ນວຽກງານຂອງພຣະອົງ. ສ່ວນພວກລູກສິດເປັນພຽງແຕ່ເຄື່ອງມືຂອງພຣະເຈົ້າເທົ່ານັ້ນ. ແລະແນ່ນອນ, ພຣະເຈົ້າຈະບໍ່ປະໃຫ້ພວກລູກສິດຂອງພຣະອົງຕ້ອງພົບກັບໄພອັນຕະລາຍ ຍ້ອນພວກເຂົາມີພຣະອົງຢູ່ນຳ. ກົງກັນຂ້າມ, ຫາກພວກລູກສິດອີງໃສ່ຄວາມປອດໄພຂອງໂລກຄືວັດຖຸເງິນຄຳແລ້ວ, ພາລະກິດການປະກາດພຣະລາໄຊຂອງພຣະເຈົ້າຈະກາຍເປັນວຽກງານພະລາໄຊຂອງໂລກ. ແລະເມື່ອພວກລູກສິດຮັບໃຊ້ພາລະໄຊຂອງໂລກແລ້ວ ພວກເຂົາກໍຈະເປັນຂອງໂລກແລະບໍ່ຕ້ອງການພຣະເຈົ້າອີກ. ສິ່ງນີ້ອາດເປັນອັນຕະລາຍຮ້າຍແຮງກວ່າໝົດໃນການເປັນສິດຂອງພຣະເຈົ້າແລະເປັນຕົ້ນໃນການປະກາດພຣະລາໄຊຂອງພຣະອົງ.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ຊ່ວຍເຕືອນໃຈພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າ, ຜູ້ໄດ້ຖືກສົ່ງໄປເພື່ອປະກາດພຣະລາໄຊຂອງພຣະອົງ, ເພື່ອພວກເຮົາຈະບໍ່ທຳໃຫ້ພຣະລາໄຊຂອງພຣະເຈົ້າເປັນພະລາໄຊຂອງໂລກຄືເລື່ອງການກິນການຢູ່, ເລື່ອງການກອບໂກຍເງິນຄຳແລະອຳນາດ. ຍ້ອນວັນໜຶ່ງສິ່ງເຫລົ່ານັ້ນຈະສູນເສຍໄປ ແຕ່ພຣະລາໄຊທີ່ແທ້ຈິງຂອງພຣະເຈົ້າຈະຄົງຢູ່ຕະຫລອດນິລັນດອນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ